ການກວດຄັດທາງການແພດ

ຄວາມຜິດປົກກະຕິຂອງອາຊິດອາມິโน

argininosuccinic acidemia (ASA)
citrullinemia (CIT) *homocystinuria* (HCY)
maple syrup urine disease (MSUD)
phenylketonuria (PKU) *tyrosinemia ປະເພດ 1* (TYR-I)

ຄວາມຜິດປົກກະຕິຂອງອາຊິດໄຂມັນ

ການຂາດການກິນ carnitine (CUD) *ການຂາດເອັນໄຊມ์ L-3-hydroxy acyl-CoA dehydrogenase ສາຍຍາວ* (LCHAD) *ການຂາດເອັນໄຊມ์ acyl-CoA dehydrogenase ສາຍປານກາງ* (MCAD) *ການຂາດໂປຣຕີນ trifunctional* (TFP) *ການຂາດເອັນໄຊມ์ acyl-CoA dehydrogenase ສາຍຍາວຫຼາຍ* (VLCAD)

ຄວາມຜິດປົກກະຕິຂອງອາຊິດອິງຄະທາດ

3-hydroxy-3-methylglutaric aciduria (HMG)
ການຂາດເອັນໄຊມ์ beta-ketothiolase (BKT)
glutaric acidemia ປະເພດ 1 (GA-I)
isovaleric acidemia (IVA)
methylmalonic acidemias (CblA,B ແລະ MUT) *ການຂາດເອັນໄຊມ์ multiple carboxylase* (MCD) *propionic acidemia* (PROP)

ຄວາມຜິດປົກກະຕິອື່ນໆ

ການຂາດເອັນໄຊມ์ biotinidase (BIOT)
congenital adrenal hyperplasia (CAH)
congenital hypothyroidism (CH)
cystic fibrosis (CF) *galactosemia* (GALT) *hemoglobinopathies* (Hb)
ການຂາດພູມຕ້ານທານລວມຕົວກັບຮຸນແຮງ (SCID)

ລູກນ້ອຍຂອງຂ້ອຍສາມາດໄດ້ຮັບການກວດຄັດຫາຄວາມຜິດປົກກະຕິອື່ນບໍ?

ແມ່ນແລ້ວ. ເຖິງແມ່ນວ່າ ຫ້ອງທົດລອງຂອງພວກເຮົາຈະກວດຄັດແຕ່ຄວາມຜິດປົກກະຕິທີ່ມີລາຍການຢູ່ຂ້າງເທິງເທົ່ານັ້ນ, ຍັງມີຄວາມຜິດປົກກະຕິທີ່ເປັນອັນຕະລາຍອື່ນ ທີ່ສາມາດກວດຫາໄດ້ຢູ່ໃນໄລຍະເກີດໃໝ່ເຊັ່ນ: ພະຍາດຫົວໃຈທີ່ເປັນມາແຕ່ກຳເນີດຮຸນແຮງ (CCHD). ນອກຈາກນັ້ນ, ການກວດຫາການສູນເສຍການໄດ້ຍິນແຕ່ຫົວທີສາມາດນຳໄປສູ່ການປັບປຸງທັກສະທາງດ້ານການປາກເວົ້າ ແລະ ພາສາໄດ້ດີຂຶ້ນ. ໂຮງໝໍທີ່ໃຫ້ການເກີດລູກທຸກແຫ່ງມີການກວດຄັດນີ້ໃຫ້ກັບເດັກເກີດໃໝ່. ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ສົນທະນາກັບຜູ້ໃຫ້ການດູແລສຸຂະພາບເດັກຂອງທ່ານ.

ວິທີປະຕິບັດເລື່ອງການຮັກສາຄວາມລັບ

ກົດໝາຍຮຽກຮ້ອງໃຫ້ກະຊວງສາທາລະນະສຸກປົກປ້ອງຄວາມລັບຂອງເດັກເກີດໃໝ່ ແລະ ຄອບຄົວຂອງເຂົາເຈົ້າ ແລະ ຮັບປະກັນໃຫ້ໄດ້ວ່າ ທຸກຮູບແບບຂອງຕົວຢ່າງຮ່າງກາຍ/ຂໍ້ມູນທີ່ສົ່ງເຂົ້າມາກວດຄັດໄດ້ຮັບການປົກປ້ອງຈາກການໃຊ້ ແລະ ການເຂົ້າເຖິງທີ່ບໍ່ເໝາະສົມ. ເງື່ອນໄຂຂອງກົດໝາຍທີ່ສັງລວມຫຍໍ້ແມ່ນໄດ້ຈັດໃຫ້ໄວ້ຢູ່ລຸ່ມນີ້.
ເງື່ອນໄຂກຳນົດສະເພາະແມ່ນໄດ້ອະທິບາຍໄວ້ຢູ່ໃນຂໍ້ທີ 246-650-050 WAC.

ສຳເນົາສະບັບເຈ້ຍແມ່ນມີໃຫ້ຕາມການຂໍ ຫຼື ມີຢູ່ໃນເວັບໄຊທ์ຂອງພວກເຮົາທີ່ www.doh.wa.gov/nbs. ຮູບແບບຕົວຢ່າງຮ່າງກາຍໃນການກວດຄັດເດັກເກີດໃໝ່ແມ່ນໄດ້ຮັກສາໄວ້ຢູ່ໃນບ່ອນຈັດເກັບທີ່ປອດໄພຢູ່ໃນຫ້ອງທົດລອງສາທາລະນະສຸກຂອງລັດເປັນເວລາ 21 ປີ ຕາມບົດທີ 70.41.190 RCW. ຫຼັງຈາກເວລານັ້ນໄປແລ້ວ, ຕົວຢ່າງຮ່າງກາຍຈະຖືກທຳລາຍ. ກະຊວງສາທາລະນະສຸກຈະທຳລາຍຕົວຢ່າງຮ່າງກາຍກ່ອນ 21 ປີ ເມື່ອໄດ້ຮັບຄຳຂໍເປັນລາຍລັກອັກສອນຈາກພໍ່ແມ່ ຫຼື ຜູ້ປົກຄອງ ແລະ ຫຼັງຈາກທີ່ໄດ້ດຳເນີນການທົດສອບຕາມຄວາມຮຽກຮ້ອງທັງໝົດ.

ການເຂົ້າຫາຕົວຢ່າງຮ່າງກາຍການກວດຄັດເດັກເກີດໃໝ່ແມ່ນຈະມີແຕ່ບຸກຄະລາກອນຂອງກະຊວງສາທາລະນະສຸກ ແລະ ບຸກຄົນທີ່ໄດ້ຮັບອະນຸມັດ ຜູ້ທີ່ເຫັນດີຈຳຮັກສາເງື່ອນໄຂການເກັບຄວາມລັບເທົ່ານັ້ນເຂົ້າເຖິງໄດ້. ຈຳເປັນຕ້ອງມີຄຳຍິນຍອມຂອງຜູ້ປົກຄອງເປັນລາຍລັກອັກສອນສຳລັບທຸກການຄົ້ນຄ້ວາທີ່ພົວພັນກັບຂໍ້ມູນສາມາດລະບຸຕົວຕົນໄດ້. ການເປີດເຜີຍຕົວຢ່າງຮ່າງກາຍ ຫຼື ຂໍ້ມູນອື່ນໃດໜຶ່ງຕ້ອງເປັນໄປຕາມກົດໝາຍຂໍ້ມູນສຸຂະພາບອັນດຽວກັນຂອງລັດ (State's Uniform Health Information Act) (ບົດທີ 70.02 RCW) ແລະ ຂໍ້ບັນຍັດຄວາມລັບ ແລະ ຄວາມປອດໄພຂອງການກວດຄັດເດັກເກີດໃໝ່ WAC ບົດທີ 246-650 (WAC Chapter 246-650 Newborn Screening).

ແຜ່ນພັບໂຄສະນານີ້ມີໃຫ້ເປັນ: ພາສາກຳປູເຈຍ, ຈີນ, ເກົາຫຼີ, ລາວ, ຣັດເຊຍ, ໂຊມາລີ, ສະເປນ, ແລະ ຫວຽດນາມ.

ສຳລັບຄົນພິການ, ແຜ່ນພັບໂຄສະນານີ້ແມ່ນມີໃຫ້ໃນຮູບແບບທາງເລືອກອື່ນຕາມການຂໍ. ເພື່ອສົ່ງຄຳຂໍ, ກະລຸນາໂທຫາເບີ 1-866-660-9050.

ການກວດຄັດເດັກເກີດໃໝ່ ແລະ ເດັກນ້ອຍຂອງທ່ານ



Newborn Screening Program
(ໂຄງການກວດຄັດເດັກເກີດໃໝ່)
P.O. Box 55729
1610 NE 150th Street
Shoreline, WA 98155-0729
ໂທລະສັບ: (206) 418-5410
1-866-660-9050
ແຟັກ: (206) 418 5415
ອີເມລ์: NBS.Prog@doh.wa.gov
ເວັບໄຊທ์: www.doh.wa.gov/nbs

Washington State Department of Health

DOH 304-007
Mar 2016
Laotian

ການກວດຄັດເດັກເກີດໃໝ່ແມ່ນຫຍັງ?

ການກວດຄັດເດັກເກີດໃໝ່ແມ່ນວິທີລະບຸເດັກນ້ອຍ ຜູ້ທີ່ມີຄວາມສ່ຽງຕໍ່ຄວາມຜິດປົກກະຕິຮຸນແຮງ ທີ່ສາມາດປິ່ນປົວໄດ້, ແຕ່ບໍ່ເຫັນໄດ້ຈະແจ້ງຢູ່ໃນເວລາເກີດ. ກົດໝາຍຂອງລັດກຳນົດວ່າ ຕົວຢ່າງຮ່າງກາຍທີ່ເປັນຈຸດເລືອດແມ່ນຕ້ອງເກັບຈາກເດັກທຸກຄົນທີ່ເກີດຢູ່ໃນລັດວໍຊິງຕັນພາຍໃນ 48 ຊົ່ວໂມງນັບຈາກການເກີດ. ຕົວຢ່າງຮ່າງກາຍນີ້ຖືກນຳໄປໃຊ້ ເພື່ອກວດຫາຄວາມຜິດປົກກະຕິທີ່ເປັນໄພຄຸກຄາມຕໍ່ຊີວິດ. (Chapter 70.83 RCW ແລະ 246-650 WAC)

ເປັນຫຍັງການກວດຄັດຈຶ່ງສຳຄັນ?

ການກວດຄັດນີ້ລະບຸຄວາມຜິດປົກກະຕິທີ່ສາມາດມີຜົນຕໍ່ຄວາມຊັກຊ້າທາງດ້ານພັດທະນາການ, ຄວາມເຈັບປ່ວຍຮຸນແຮງ ຫຼື ແມ້ແຕ່ເສຍຊີວິດໄດ້ ຖ້າບໍ່ກວດພົບ ແລະ ປິ່ນປົວແຕ່ຫົວທີ. ອາດຈະເຫັນວ່າເດັກເກີດໃໝ່ມີສຸຂະພາບສົມບູນແຂງແຮງດີ, ແຕ່ຍັງມີຄວາມຜິດປົກກະຕິຮຸນແຮງ. ການຊອກຫາບັນຫາເຫຼົ່ານີ້ແຕ່ຫົວທີ ແລະ ການປິ່ນປົວພວກມັນສາມາດປ້ອງກັນອາການແຊກຊ້ອນຮ້າຍແຮງຫຼາຍອັນໄດ້. ໂຊກຍັງດີ, ມີການປິ່ນປົວໃຫ້ຢູ່ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນຜົນກະທົບຂອງຄວາມຜິດປົກກະຕິຂອງສິ່ງເຫລົ່ານີ້ລົງໄດ້ຫຼາຍ.

ການກວດຄັດເດັກເກີດໃໝ່ແມ່ນວິທີການສຳຄັນອັນໜຶ່ງເພື່ອໃຫ້ລູກຂອງທ່ານໄດ້ຮັບການດູແລສຸຂະພາບໃຫ້ດີທີສຸດທີ່ເປັນໄປໄດ້. ການກວດເລືອດແບບງ່າຍໆສາມາດໃຫ້ທ່ານ ແລະ ຜູ້ໃຫ້ການດູແລສຸຂະພາບຂອງລູກຂອງທ່ານຮູ້ຂໍ້ມູນກ່ຽວກັບສຸຂະພາບຂອງລູກຂອງທ່ານ ທີ່ທ່ານອາດຈະບໍ່ຮູ້ຈັກໄດ້.

ການກວດຄັດເຮັດແນວໃດ?

ທຸກການກວດຄັດແມ່ນໃຊ້ເລືອດສອງສາມຢອດ ທີ່ເອົາມາຈາກສົ້ນຕີນຂອງລູກຂອງທ່ານ. ຕົວຢ່າງເລືອດແມ່ນເອົາເກັບໃສ່ເຈ້ຍດູດຊຶມພິເສດ ແລະ ສົ່ງໄປໃຫ້ກັບໂຄງການກວດຄັດເດັກເກີດໃໝ່ (Newborn Screening Program) ຢູ່ໃນຫ້ອງທົດລອງສາທາລະນະສຸກຂອງລັດຢູ່ໃນເມືອງ Shoreline ເພື່ອເຮັດການກວດ. ໂຮງໝໍ ຫຼື ຜູ້ໃຫ້ການດູແລສຸຂະພາບ ຜູ້ທີ່ສົ່ງຕົວຢ່າງຮ່າງກາຍຈະໄດ້ຮັບແจ້ງຜົນພາຍໃນສອງສາມວັນ.

ການກວດຄັດຄວນຈະເຮັດສຳເລັດເມື່ອໃດ?

ໂດຍທົ່ວໄປແລ້ວ ຕົວຢ່າງຮ່າງກາຍໃນການກວດຄັດເທື່ອທຳອິດແມ່ນຄວນຈະເກັບເອົາເມື່ອເດັກນ້ອຍມີອາຍຸລະຫວ່າງ 18 ຫາ 48 ຊົ່ວໂມ. ອັນນີ້ຈະເຮັດໃຫ້ເດັກແດງທີ່ໄດ້ຮັບຜົນກະທົບໄດ້ຮັບການປິ່ນປົວທັນທີທີ່ເປັນໄປໄດ້. ຕົວຢ່າງຮ່າງກາຍອັນທີສອງເອົາເປັນປະຈຳຄວນເກັບເອົາເມື່ອມີອາຍຸລະຫວ່າງ 7 ຫາ 14 ວັນ, ແຕ່ກໍ່ຍັງຈະມີຜົນປະໂຫຍດສຳລັບເດັກອາຍຸໃຫຍ່ກ່ວານັ້ນ. ຈະໄດ້ເຮັດການກວດເພີ່ມເຕີມ ເມື່ອຜູ້ໃຫ້ການບໍລິການດູແລສຸຂະພາບຂອງລູກຂອງທ່ານຮ້ອງຂໍ.

ເປັນຫຍັງຈຶ່ງແນະນຳໃຫ້ເອົາຕົວຢ່າງຮ່າງກາຍສອງຄັ້ງ?

ຄວາມຜິດປົກກະຕິສ່ວນໃຫຍ່ແມ່ນຈະຖືກກວດພົບຢູ່ໃນຕົວຢ່າງຮ່າງກາຍອັນທຳອິດ, ແມ້ແຕ່ຈະເອົາຢູ່ໃນມື້ເກີດກໍ່ໄດ້. ແນະນຳໃຫ້ເອົາຕົວຢ່າງຮ່າງກາຍຄັ້ງທີສອງອີກ ເນື່ອງຈາກວ່າ ຄວາມຜິດປົກກະຕິບາງອັນອາດຈະບໍ່ສາມາດກວດພົບໄດ້ ຈົນກ່ວາເດັກນ້ອຍໃຫຍ່ຂຶ້ນມາອີກຈັກໜ້ອຍ.

ໃນບາງຄັ້ງອາດຈະມີການຂໍເອົາຕົວຢ່າງຮ່າງກາຍຫຼາຍກ່ວາສອງຄັ້ງ. ອັນນີ້ບໍ່ໄດ້ໝາຍຄວາມວ່າ ລູກຂອງທ່ານມີຄວາມຜິດປົກກະຕິອັນໜຶ່ງໃນນັ້ນ. ເຫດຜົນທົ່ວໄປທີ່ສຸດສຳລັບການຂໍຕົວຢ່າງຮ່າງກາຍເພີ່ມເຕີມ ແມ່ນວ່າ ຜົນໄດ້ຮັບກ່ອນນັ້ນບໍ່ສາມາດສະຫຼຸບໄດ້.

ການເກັບຄ່າແມ່ນຈະເກັບເທື່ອດຽວຕໍ່ກັບການກວດຄັດເດັກແດງ. ຕົວຢ່າງຮ່າງກາຍເພີ່ມເຕີມແມ່ນໄດ້ຮັບການກວດໂດຍບໍ່ເສຍຄ່າເພີ່ມເຕີມໃດອີກ. ເຖິງແນວໃດກໍ່ຕາມ, ຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານອາດຈະເກັບຄ່າທຳນຽມ ເພື່ອເກັບເອົາຕົວຢ່າງຮ່າງກາຍ. ຖ້າຈຳເປັນນັ້ນ, ການກວດວິນິໄສແມ່ນຈະມີຄ່າໃຊ້ຈ່າຍເພີ່ມເຕີມ.

ຄວາມຜິດປົກກະຕິໃດແດ່ທີ່ຖືກກວດພົບໄດ້?

ສຳລັບລາຍການຄົບຖ້ວນຂອງສະພາບຕ່າງໆ, ກະລຸນາເບິ່ງດ້ານຫຼັງຂອງແຜ່ນພັບໂຄສະນານີ້.

ຈະເກີດອັນໃດຂຶ້ນ ຖ້າມີການສົງໄສຄວາມຜິດປົກກະຕິ?

ຖ້າການກວດຄັດເດັກເກີດໃໝ່ຊີ້ບອກว່າ ອາດຈະມີບັນຫາ, ຜູ້ໃຫ້ການບໍລິການດູແລສຸຂະພາບຂອງລູກຂອງທ່ານຈະໄດ້ຮັບການຕິດຕໍ່ທັນທີ. ຈະແນະນຳໃຫ້ມີການວິນິໄສ ເພື່ອໃຫ້ສາມາດເລີ່ມການປິ່ນປົວໄດ້ ໂດຍບໍ່ມີຄວາມຊັກຊ້າ ຖ້າລູກຂອງທ່ານໄດ້ຮັບຜົນກະທົບຈາກໜຶ່ງໃນຄວາມຜິດປົກກະຕິ.

ຂ້ອຍຈະຂອກຮູ້ຜົນໄດ້ຮັບໄດ້ແນວໃດ?

ຖ້າທ່ານມີຄຳຖາມກ່ຽວກັບຜົນໄດ້ຮັບຈາກການກວດຄັດຂອງລູກຂອງທ່ານ, ກະລຸນາຕິດຕໍ່ຫາຜູ້ໃຫ້ບໍລິການດູແລສຸຂະພາບຂອງທ່ານ. ຖ້າຜູ້ໃຫ້ການບໍລິການດູແລສຸຂະພາບບໍ່ມີຜົນໄດ້ຮັບ, ລາວ ຫຼື ນາງ ຄວນຈະຕິດຕໍ່ກັບ Newborn Screening Program ເພື່ອຂໍສຳເນົາສະບັບໜຶ່ງ.

ໃນຖານະທີ່ເປັນພໍ່ແມ່, ຂ້ອຍຂໍປະຕິເສດທີ່ຈະເຮັດການກວດຄັດເດັກເກີດໃໝ່ບໍ?

ກົດໝາຍໃຫ້ສິດກັບພໍ່ແມ່ ເພື່ອປະຕິເສດການກວດຄັດລູກຂອງເຂົາເຈົ້າໄດ້ ຖ້າການກວດຄັດນີ້ຂັດກັບຄວາມເຊື່ອທາງສາສະໜາ ຫຼື ທຳນຽມປະຕິບັດຂອງເຂົາເຈົ້າ. ຖ້າອັນນີ້ເປັນຄວາມຈິງສຳລັບທ່ານ, ຈົ່ງຢ່າລືມບອກໃຫ້ກັບພະນັກງານໂຮງໝໍ ຫຼື ຜູ້ໃຫ້ການດູແລສຸຂະພາບຂອງທ່ານຊາບ.

ຂ້ອຍສາມາດເອົາຂໍ້ມູນເພີ່ມເຕີມກ່ຽວກັບການກວດຄັດເດັກເກີດໃໝ່ໄດ້ຢູ່ໃສ?

ສຳລັບຂໍ້ມູນເພີ່ມເຕີມ, ໃຫ້ລົມກັບຜູ້ໃຫ້ການດູແລສຸຂະພາບຂອງທ່ານ ຫຼື ຕິດຕໍ່ຫາ Newborn Screening Program ດ້ວຍການໃຊ້ຂໍ້ມູນທີ່ຈັດໃຫ້ຢູ່ດ້ານຫຼັງຂອງໃບໂຄສະນານີ້.